ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 034/ປປທ

ນະຄອນຫຼວງວຽງຈັນ, ວັນທີ 17-01-2013

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ

---

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 039/ສພຊ, ລົງວັນທີ 17 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08/ຄປຈ, ລົງວັນທີ 04 ມັງກອນ 2013;

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ.

ມາດຕາ 2. ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 039 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ ໃນວາລະກອງປະຊຸມຕອນເຊົ້າຂອງວັນທີ 17 ທັນວາ 2012

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1</u>. ຮັບຮອງເອົາກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 17 ທັນວາ 2012

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------------

ສະພາແຫ່ງຊາດ

ເລກທີ 27 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 18 ທັນວາ 2012

# ກົດໝາຍ
# ວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ
# ( ສະບັບປັບປຸງ )

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອບໍ່ໃຫ້ຊັບສິນຂອງລັດ, ລວມໝູ່, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຖືກເສຍຫາຍ, ຖືກຍັກຍອກ ຫຼື ສໍ້ໂກງ, ນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ປົກປ້ອງຜູ້ບໍລິສຸດ ແນໃສ່ເຮັດໃຫ້ອົງການລັດມີຄວາມໂປ່ງໃສ, ເຂັ້ມແຂງ ແລະ ສາມາດກວດກາໄດ້ທຸກເວລາ ປະກອບສ່ວນເຮັດໃຫ້ມີສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ ມີການຂະຫຍາຍຕົວ ແລະ ໝັ້ນຄົງ, ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

**ມາດຕາ 2 (ປັບປຸງ) ການສໍ້ລາດບັງຫຼວງ**

ການສໍ້ລາດບັງຫຼວງ ແມ່ນ ພຶດຕິກຳຂອງພະນັກງານ ທີ່ສວຍໃຊ້ສິດອຳນາດ, ຖານະຕຳແໜ່ງ ແລະ ໜ້າທີ່ຂອງຕົນ ເພື່ອຍັກຍອກ, ສໍ້ໂກງ, ຮັບສິນບົນ, ທີ່ໃຫ້ສິນບົນ ແລະ ມີພຶດຕິກຳອື່ນ ທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ເພື່ອຫາຜົນປະໂຫຍດໃຫ້ຕົນເອງ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກ ຊຶ່ງກໍ່ຄວາມເສັຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

ພະນັກງານ ທີ່ໄດ້ກ່າວໄວ້ໃນກົດໝາຍສະບັບນີ້ ແມ່ນ ພະນັກງານຂອງລັດ, ພະນັກງານວິສາຫະກິດ, ພະນັກງານຕ່າງປະເທດ ແລະ ພະນັກງານອົງການຈັດຕັ້ງສາກົນ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ພະນັກງານຂອງລັດ ໝາຍເຖິງ** ພະນັກງານນຳພາຂັ້ນຕ່າງໆ, ພະນັກງານຄຸ້ມຄອງ, ພະນັກງານວິຊາການ, ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ພະນັກງານລັດວິສາຫະກິດປະສົມ, ລັດຮຸ້ນສ່ວນ ກອງບໍລິຫານວິຊາການ, ທຸກການຈັດຕັ້ງການຜະລິດທຸລະກິດ ທີ່ລັດຈັດຕັ້ງຂຶ້ນ ລວມທັງນາຍບ້ານ ແລະ ຜູ້ໄດ້ຮັບມອບສິດ, ໜ້າທີ່ ໃດໜຶ່ງ ຈາກທາງການ;

2. **ພະນັກງານວິສາຫະກິດ ໝາຍເຖິງ** ພະນັກງານວິສາຫະກິດເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມາເຄື່ອນໄຫວດຳເນີນທຸລະກິດຢູ່ ສປປ ລາວ;

3. **ພະນັກງານຕ່າງປະເທດ ໝາຍເຖິງ** ພະນັກງານລັດຂອງປະເທດໃດໜຶ່ງ ທີ່ຖືກແຕ່ງຕັ້ງຈາກປະເທດນັ້ນ ໃຫ້ມາເຄື່ອນໄຫວວຽກງານ ຢູ່ ສ ປປ ລາວ;

4. **ພະນັກງານອົງການຈັດຕັ້ງສາກົນ ໝາຍເຖິງ** ພະນັກງານທີ່ໄດ້ຮັບການແຕ່ງຕັ້ງ ຫຼື ໄດ້ຮັບອະນຸຍາດຈາກອົງການຈັດຕັ້ງສາກົນໃດໜຶ່ງ ໃຫ້ມາເຄື່ອນໄຫວວຽກງານຢູ່ ສປປ ລາວ ໃນນາມອົງການນັ້ນ.

**ມາດຕາ 4 (ປັບປຸງ) ການສະກັດກັ້ນ ແລະ ການຕ້ານ ການສໍ້ລາດບັງຫຼວງ**

ການສະກັດກັ້ນການສໍ້ລາດບັງຫຼວງ ແມ່ນ ການຈຳກັດ, ການປ້ອງກັນ ບໍ່ໃຫ້ການສໍ້ລາດບັງຫຼວງເກີດຂຶ້ນຢູ່ໃນການຈັດຕັ້ງລັດ, ການເມືອງ ແລະ ສັງຄົມ ດ້ວຍການໂຄສະນາສຶກສາອົບຮົມ, ຕິດຕາມ, ກວດກາ, ແຈ້ງຊັບສິນ, ປະຕິບັດນະໂຍບາຍ ແລະ ອື່ນໆ.

ການຕ້ານການສໍ້ລາດບັງຫຼວງ ແມ່ນ ການກຳຈັດ, ປາບປາມ ແລະ ລຶບລ້າງທຸກການກະທຳທີ່ເປັນການສໍ້ລາດບັງຫຼວງ ດ້ວຍການກວດກາ, ການສືບສວນ-ສອບສວນ, ການສຶກສາອົບຮົມ, ການລົງວິໄນ ແລະ ການລົງໂທດ ຕາມກົດໝາຍ.

ລັດ ຕ້ອງສ້າງເງື່ອນໄຂໃຫ້ພົນລະເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ ໄດ້ມີສ່ວນຮ່ວມໃນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງຕາມລະບຽບການ.

**ມາດຕາ 5 (ປັບປຸງ) ຫຼັກການຕ້ານການສໍ້ລາດບັງຫຼວງ**

**ການຕ້ານການສໍ້ລາດບັງຫຼວງ ຕ້ອງດຳເນີນຕາມຫຼັກການ ດັ່ງນີ້:**

- ຖືເອົາການສະກັດກັ້ນ ເປັນຕົ້ນຕໍ ແລະ ເອົາການຕ້ານ ເປັນສຳຄັນ;

- ດຳເນີນການກວດກາ ແລະ ສືບສວນ-ສອບສວນ ຕໍ່ທຸກປາກົດການສໍ້ລາດບັງຫຼວງ ຢ່າງທັນການ, ເຂັ້ມງວດ, ເປັນເອກະລາດ, ພາວະວິໄສ, ຊັດເຈນ ແລະ ເປີດເຜີຍ;

- ແກ້ໄຂຢ່າງທັນການ, ເຂັ້ມງວດ ແລະ ຍຸຕິທຳ ໃນກໍລະນີທີ່ມີການກະທຳຜິດ;

- ຮັບປະກັນ ບໍ່ໃຫ້ມີການແຊກແຊງ, ຂັດຂວາງ ຫຼື ນາບຂູ່ຈາກບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ;

- ຕ້ອງໃຫ້ການຮ່ວມມື, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ການ ກວດກາ.

**ມາດຕາ 6 ຄວາມຮັບຜິດຊອບຂອງອົງການຕ້ານການສໍ້ລາດບັງຫຼວງ**

ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງປະຕິບັດໜ້າທີ່ຂອງຕົນ ຢ່າງພາວະວິໄສ, ໂປ່ງໃສ, ຍຸຕິທຳ, ຖືກຕ້ອງຕາມຄວາມເປັນຈິງ, ຕາມສິດ, ໜ້າທີ່ ແລະ ຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ ພ້ອມທັງມີຄວາມຮັບຜິດຊອບ ຕໍ່ໜ້າກົດໝາຍ ກ່ຽວກັບການເຄື່ອນໄຫວຂອງຕົນ ແລະ ຢູ່ພາຍໃຕ້ການກວດກາຂອງປະຊາຊົນ ແລະ ສະພາແຫ່ງຊາດ.

**ມາດຕາ 7 (ປັບປຸງ) ພັນທະໃນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ**

ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ສະຖານທູດ, ສະຖານກົງສູນ, ອົງການຈັດຕັ້ງສາກົນ, ສື່ມວນຊົນ ແລະ ພົນລະເມືອງທຸກຄົນ ມີພັນທະປະກອບສ່ວນເຂົ້າໃນການເຄື່ອນໄຫວ ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ດ້ວຍການຮ່ວມມື, ອຳນວຍຄວາມສະດວກ, ສະໜອງຂໍ້ມູນ, ຫຼັກຖານໃຫ້ແກ່ອົງການທີ່ມີສິດ ແລະ ໜ້າທີ່ ກ່ຽວຂ້ອງຢ່າງທັນການ.

**ມາດຕາ 8 ການປົກປ້ອງ**

ລັດ ປົກປ້ອງພະນັກງານ ທີ່ດຳເນີນການຕ້ານການສໍ້ລາດບັງຫຼວງ ລວມທັງຜູ້ເຂົ້າຮ່ວມໃນວຽກງານດັ່ງກ່າວ ເຊັ່ນ ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ ຂ່າວສານ, ຜູ້ຖືກເສຍຫາຍ, ພະຍານ, ຜູ້ຊ່ຽວຊານ ແລະ ຄອບ ຄົວຂອງພວກກ່ຽວ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ ຫຼື ຊັບສິນ.

**ມາດຕາ 9 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ພະນັກງານຂອງລັດ, ພະນັກງານວິສາຫະກິດ, ພະນັກງານຕ່າງປະເທດ ແລະ ພະນັກງານອົງການຈັດຕັ້ງສາກົນ.

**ມາດຕາ 10 (ປັບປຸງ) ການຮ່ວມມືສາກົນ**

ລັດ ຊຸກຍູ້, ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການສໍາມະນາ, ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ແລະ ການຍາດແຍ່ງການຊ່ວຍເຫຼືອ ເພື່ອພັດທະນາວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ບົນພື້ນຖານລະບຽບກົດໝາຍຂອງ ສປປ ລາວ ແລະ ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ

**ມາດຕາ 11 (ປັບປຸງ) ພຶດຕິກໍາ ທີ່ເປັນການສໍ້ລາດບັງຫຼວງ**

**ພຶດຕິກໍາ ທີ່ເປັນການສໍ້ລາດບັງຫຼວງ ສະແດງອອກ ດັ່ງນີ້:**

- ການຍັກຍອກຊັບຂອງລັດ ຫຼື ລວມໝູ່;
- ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່;
- ການໃຫ້ສິນບົນ;
- ການຮັບສິນບົນ;
- ການສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
- ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່;
- ການໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
- ການລັກໄລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ອອກແບບ, ຄິດໄລ່ ແລະ ອື່ນໆ;
- ການໂກງການປະມູນ ຫຼື ການສໍາປະທານ;
- ການປອມແປງເອກະສານ ຫຼື ການນໍາໃຊ້ເອກະສານປອມ;
- ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ;
- ການກົດໜ່ວງ, ຖ່ວງດຶງເອກະສານ.

**ມາດຕາ 12 ການຍັກຍອກຊັບຂອງລັດ ຫຼື ລວມໝູ່**

ການຍັກຍອກຊັບຂອງລັດ ຫຼື ລວມໝູ່ ແມ່ນ ການສວຍໃຊ້ຄວາມເຊື່ອໃຈ ເພື່ອລັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາຊັບຂອງລັດ ຫຼື ລວມໝູ່ ທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ, ນຳໃຊ້, ຂົນສົ່ງ, ກໍ່ສ້າງ, ສ້ອມແປງ ຫຼື ເຮັດວຽກໃດວຽກໜຶ່ງ.

**ມາດຕາ 13 ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່**

ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່ ແມ່ນ ການໃຊ້ເລ່ຫຼ່ຽມ ຕົວະຍົວະ, ຫຼອກລວງ ດ້ວຍວິທີໃດກໍຕາມ ເພື່ອເຮັດໃຫ້ຜູ້ມີໜ້າທີ່ຮັບຜິດຊອບຊັບຂອງລັດ ຫຼື ລວມໝູ່ ຫຼື ຜູ້ອື່ນ ເອົາຊັບດັ່ງກ່າວໃຫ້ຕົນ.

**ມາດຕາ 14 (ໃໝ່) ການໃຫ້ສິນບົນ**

ການໃຫ້ສິນບົນ ແມ່ນ ການສະເໜີໃຫ້, ເອົາໃຫ້ ຫຼື ສັນຍາວ່າຈະໃຫ້ເງິນ, ຊັບສິ່ງຂອງ ຫຼື ຜົນປະໂຫຍດໃດໜຶ່ງ ດ້ວຍຕົນເອງ ຫຼື ຜ່ານສື່ກາງ ແກ່ພະນັກງານ ໂດຍທາງກົງ ຫຼື ທາງອ້ອມ ເພື່ອໃຫ້ປະຕິບັດ, ເລືອກປະຕິບັດ ຫຼື ລະເວັ້ນ ການປະຕິບັດໜ້າທີ່ຂອງພະນັກງານ ເພື່ອຈຸດປະສົງ ແລະ ຜົນປະໂຫຍດຂອງຜູ້ໃຫ້ສິນບົນ.

**ມາດຕາ 15 ການຮັບສິນບົນ**

ການຮັບສິນບົນ ແມ່ນ ການທີ່ພະນັກງານຮັບເອົາ, ທວງເອົາ, ຂໍເອົາ ຫຼື ຕົກລົງຮັບເອົາເງິນ, ຊັບສິ່ງຂອງ ຫຼື ຜົນປະໂຫຍດໃດໜຶ່ງຈາກຜູ້ໃຫ້ສິນບົນ ໂດຍທາງກົງ ຫຼື ທາງອ້ອມ ແລ້ວປະຕິບັດ, ເລືອກປະຕິບັດ ຫຼື ລະເວັ້ນການປະຕິບັດໜ້າທີ່ຂອງຕົນ ຕາມຈຸດປະສົງ ແລະ ເພື່ອຜົນປະໂຫຍດຂອງຜູ້ໃຫ້ສິນບົນ.

**ມາດຕາ 16 ການສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ**

ການສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ແມ່ນ ການອີງໃສ່ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ຂອງຕົນ ເພື່ອຫາຜົນປະໂຫຍດໃຫ້ແກ່ ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ຊຶ່ງກໍ່ຄວາມເສັຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ.

**ມາດຕາ 17 ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່**

ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່ ແມ່ນ ການນໍາໃຊ້ຊັບຂອງລັດ ຫຼື ລວມໝູ່ ເພື່ອຫາຜົນປະໂຫຍດສ່ວນຕົວ ຊຶ່ງໄດ້ກໍ່ຄວາມເສັຍຫາຍ ແກ່ຜົນປະໂຫຍດຂອງລັດ ຫຼື ລວມໝູ່.

**ມາດຕາ 18 ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ**

ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ແມ່ນ ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນທີ່ລະບຽບກົດໝາຍໄດ້ກຳນົດໄວ້ ໂດຍເຈດຕະນາ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ຫຼື ພັກພວກ ຊຶ່ງກໍ່ຄວາມເສັຍຫາຍ ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 19 ການລັກໄລບ, ປອມແປງມາດຕະຖານເຕັກນິກ ກໍ່ສ້າງ**

ການຫຼັກໄລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແມ່ນ ການລັກໄລບ, ປອມແປງມາດຕະຖານເຕັກນິກໃນການສຳຫຼວດ, ອອກແບບ, ຄິດໄລ່ ແລະ ອື່ນໆ ລະຫວ່າງເຈົ້າຂອງໂຄງການກັບຜູ້ຮັບເໝົາ ແລະ ຜູ້ອື່ນທີ່ກ່ຽວຂ້ອງກັບກິດຈະການໃດໜຶ່ງ ເຊັ່ນ ການກໍ່ສ້າງ, ການສ້ອມແປງ, ການປະດັບປະດາຕົບແຕ່ງ, ການຕິດຕັ້ງ ແລະ ກິດຈະການອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສັຍຫາຍ ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 20 ການໂກງການປະມູນ ຫຼື ການສຳປະທານ**

ການໂກງການປະມູນ ຫຼື ການສຳປະທານ ແມ່ນ ການຕົກລົງ ລະຫວ່າງພະນັກງານຂອງລັດກັບບໍລິສັດຮັບເໝົາ ແລະ ຜູ້ອື່ນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂໃຫ້ຊະນະການປະມູນ ຫຼື ການສຳປະທານ ໃນກິດຈະການໃດໜຶ່ງຂອງລັດ ເພື່ອຫາຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສັຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 21 ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ**

ການປອມແປງເອກະສານ ແມ່ນ ການປອມແປງລາຍເຊັນ, ຕາປະທັບ, ຕັດ ຫຼື ເພີ່ມຂໍ້ຄວາມໃດໜຶ່ງ ໃສ່ເນື້ອໃນເອກະສານ.

ການນຳໃຊ້ເອກະສານປອມ ແມ່ນ ການນຳໃຊ້ເອກະສານ ທີ່ຮູ້ວ່າເປັນເອກະສານປອມ ແຕ່ນຳໄປໃຊ້ ເພື່ອຫາຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສັຍຫາຍ ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 22 ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ**

ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ ແມ່ນ ການເປີດເຜີຍເອກະສານ ຫຼື ຂໍ້ມູນລັບ, ການຕົກລົງຂອງລັດ ຫຼື ທາງລັດຖະການ ທີ່ລັດບໍ່ອະນຸຍາດໃຫ້ເປີດເຜີຍ ເພື່ອຜົນປະໂຫຍດສ່ວນຕົວ.

**ມາດຕາ 23 ການກົດໜ່ວງ, ຖ່ວງດຶງເອກະສານ**

ການກົດໜ່ວງ, ຖ່ວງດຶງເອກະສານ ແມ່ນ ການກັກ, ໜ່ວງໜ່ຽວ, ແກ່ຍາວເວລາໃນການແກ້ໄຂເອກະສານທາງການ ໂດຍຜູ້ມີຖານະຕຳແໜ່ງ, ສິດ ອຳນາດ, ໜ້າທີ່ ຊຶ່ງກໍ່ຄວາມເສັຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

## ໝວດທີ 3
## ມາດຕະການສະກັດກັ້ນການສໍ້ລາດບັງຫຼວງ

**ມາດຕາ 24 (ປັບປຸງ) ການເປັນແບບຢ່າງ ຂອງພະນັກງານ**

ພະນັກງານທຸກຂັ້ນ ເປັນຕົ້ນ ພະນັກງານນຳພາຂັ້ນຕ່າງໆ ຕ້ອງເປັນແບບຢ່າງໃນການປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ, ດຳລົງຊີວິດ ຢ່າງປອດໃສ ຂາວສະອາດ, ບໍ່ສໍ້ລາດບັງຫຼວງ.

**ມາດຕາ 25 ຄວາມຮັບຜິດຊອບຂອງລັດ**

**ເພື່ອສະກັດກັ້ນການສໍ້ລາດບັງຫຼວງ ລັດ ມີ ຄວາມຮັບຜິດຊອບ ດັ່ງນີ້:**

1. ສຶກສາອົບຮົມສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ;
2. ປັບປຸງກົນໄກການບໍລິຫານລັດໃຫ້ດີ, ມີປະສິດທິຜົນ ແລະ ມີຄວາມໂປ່ງໃສ;
3. ກຳນົດ ແລະ ຈັດຕັ້ງປະຕິບັດນະໂຍບາຍດ້ານຕ່າງໆຕໍ່ພະນັກງານ ແຕ່ລະຂັ້ນໃຫ້ຈະແຈ້ງ ແລະ ຮັບປະກັນການແກ້ໄຂຊີວິດການເປັນຢູ່ຢ່າງເໝາະສົມ;
4. ລົງວິໄນ, ລົງໂທດຜູ້ກະທຳຜິດ ໃນສະຖານສໍ້ລາດບັງຫຼວງ ຢ່າງເຂັ້ມງວດ ແລະທັນການ;
5. ສົ່ງເສີມໃຫ້ປະຊາຊົນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ ມີສ່ວນຮ່ວມໃນການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມລະບຽບການ.

**ມາດຕາ 26 (ປັບປຸງ) ຄວາມຮັບຜິດຊອບ ຂອງການຈັດຕັ້ງຕ່າງໆ**

ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແຕ່ສູນກາງລົງຮອດທ້ອງຖິ່ນ ລວມທັງວິສາຫະກິດ ຕ້ອງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ຮັບມອບໝາຍຢ່າງຄົບຖ້ວນ, ເຂັ້ມງວດ, ທັນການ ແລະ ດຳເນີນການຕິດຕາມ, ກວດກາ,

ສຳຫຼວດ ຕຳນິສິ່ງຂ່າວ ຊຶ່ງກັນ ແລະ ກັນ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງພະນັກງານ ພ້ອມທັງສຶກສາອົບຮົມຢ່າງເປັນປົກກະຕິ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສະກັດກັ້ນ, ຕ້ານ ແລະ ແກ້ໄຂ ການສໍ້ລາດບັງຫຼວງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

**ມາດຕາ 27 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານ**

**ຫ້າມພະນັກງານ ມີ ພຶດຕິກຳ ດັ່ງນີ້:**

1. ຮັບເງິນ, ວັດຖຸສິ່ງຂອງ ຫຼື ຜົນປະໂຫຍດອື່ນ ຈາກບຸກຄົນ, ການຈັດຕັ້ງທີ່ກ່ຽວພັນກັບໜ້າທີ່ວຽກງານທີ່ຕົນຮັບຜິດຊອບໂດຍທາງກົງ ຫຼື ທາງອ້ອມ ຊຶ່ງອາດຈະສ້າງຄວາມເສັຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

2. ໃຫ້ເງິນ, ວັດຖຸສິ່ງຂອງ ຫຼື ຜົນປະໂຫຍດອື່ນ ແກ່ບຸກຄົນ, ການຈັດຕັ້ງທີ່ກ່ຽວຂ້ອງໂດຍທາງກົງ ຫຼື ທາງອ້ອມ ເພື່ອຜົນປະໂຫຍດຂອງຕົນ ຊຶ່ງອາດຈະສ້າງຄວາມເສັຍຫາຍ ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

3. ສ້າງຄວາມຫຍຸ້ງຍາກ, ກົດໜ່ວງ, ຖ່ວງດຶງ, ແຊກແຊງ ໃນການແກ້ໄຂວຽກງານໃດໜຶ່ງ;

4. ເປີດບັນຊີເງິນຝາກຢູ່ນອກ ສປປ ລາວ ໂດຍບໍ່ແຈ້ງໃຫ້ການຈັດຕັ້ງທີ່ກ່ຽວຂ້ອງຊາບ;

5. ເປັນທີ່ປຶກສາໃຫ້ແກ່ວິສາຫະກິດເອກະຊົນ ທີ່ພົວພັນເຖິງສິດຕົກລົງຂອງຕົນເພື່ອຜົນປະໂຫຍດສ່ວນຕົວ;

6. ເປັນນາຍໜ້າໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງ ເພື່ອຫາຜົນປະໂຫຍດສ່ວນຕົວ ເຊັ່ນ ແລ່ນຄະດີ, ແລ່ນໂຄງການ, ຂໍໂກຕາ;

7. ໃຊ້ຖານະຕຳແໜ່ງ ເພື່ອກູ້ຢືມເງິນຂອງສ່ວນລວມ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຜູ້ອື່ນ ຫຼື ຄ້ຳປະກັນໃຫ້ຜູ້ອື່ນ ໄປກູ້ຢືມເງິນຢູ່ທະນາຄານ;

8. ບັນຈຸ, ສັບຊ້ອນ ຫຼື ແຕ່ງຕັ້ງ ເມັຍ ຫຼື ຜົວ, ລູກ ຫຼື ຍາດໃກ້ຊິດຂອງຕົນເຂົ້າໃນຕຳແໜ່ງນຳພາ, ຄຸ້ມຄອງໃນບາງຂົງເຂດວຽກງານທີ່ຕົນຮັບຜິດຊອບທີ່ຈະສ້າງເງື່ອນໄຂ ໃຫ້ມີການສໍ້ລາດບັງຫຼວງ ເຊັ່ນ ວຽກງານຈັດຕັ້ງ, ວຽກງານກວດກາ, ການເງິນ-ການບັນຊີ, ຄັງເງິນ, ການຮັກສາສາງ, ການຈັດຊື້-ຈັດຈ້າງ ແລະ ອື່ນໆ;

9. ຄອບຄອງ ຫຼື ນຳໃຊ້ຊັບຂອງລັດ, ລວມໝູ່ ໂດຍບໍ່ຖືກຕ້ອງ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ;

10. ນຳໃຊ້ເງິນ ຫຼື ຊັບຂອງລັດ, ລວມໝູ່ ເພື່ອສັງສັນຊຸມແຊວ, ເອົາເປັນຂອງຂວັນ ຫຼື ແບ່ງປັນໃຫ້ພະນັກງານ ຫຼື ບຸກຄົນອື່ນ ນອກລະບຽບກົດໝາຍ;

11. ເປີດເຜີຍຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການ;

12. ປອມແປງເອກະສານ, ລັກໂລບ, ປອມແປງມາດຕະຖານເຕັກນິກ, ໂກງການປະມູນ ຫຼື ສຳປະທານ;

13. ປາບປາມ, ນາບຂູ່, ກີດໜ່ວງຜູ້ຮ້ອງຟ້ອງ, ຜູ້ຕໍານິສິ່ງຂ່າວ ແລະ ຜູ້ສະເໜີລາຍງານຂໍ້ມູນດ້ານຫຍໍ້ທໍ້ຕ່າງໆ ກ່ຽວກັບຕົນ;

14. ແອບອ້າງຊື່ສຽງ, ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ຂອງຂັ້ນເທິງ ຫຼື ຂອງຜູ້ອື່ນເພື່ອຫາຜົນປະໂຫຍດສ່ວນຕົວ.

### ມາດຕາ 28 ການແຈ້ງຊັບສິນ

ຜູ້ມີຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ກ່ອນ ແລະ ຫຼັງ ຮັບຕໍາແໜ່ງ, ໜ້າທີ່ ຕ້ອງແຈ້ງຊັບສິນ ແລະ ໜີ້ສິນຂອງຕົນ, ຂອງຜົວ ຫຼື ເມຍ ແລະ ລູກ ທີ່ຢູ່ໃນການຄຸ້ມຄອງຂອງຕົນຢ່າງຊັດເຈນ, ສັດຊື່ບໍລິສຸດ ແລະ ມີຄວາມຮັບຜິດຊອບຕໍ່ກົດໝາຍ ກ່ຽວກັບເນື້ອໃນການແຈ້ງນັ້ນ.

ລັດຖະບານ ເປັນຜູ້ອອກລະບຽບການລະອຽດ ກ່ຽວກັບການແຈ້ງຊັບສິນ ແລະ ໜີ້ສິນ.

## ໝວດທີ 4
## ການດໍາເນີນການກວດກາ ການສໍ້ລາດບັງຫຼວງ

### ມາດຕາ 29 ສາເຫດທີ່ພາໃຫ້ມີການດໍາເນີນການກວດກາ

**ສາເຫດທີ່ພາໃຫ້ມີການດໍາເນີນການກວດກາ ຂອງອົງການຕ້ານການສໍ້ລາດບັງຫຼວງ ມີ ດັ່ງນີ້:**

- ເມື່ອພົບເຫັນຂໍ້ມູນ, ຫຼັກຖານທີ່ໜ້າເຊື່ອຖືໄດ້ ກ່ຽວກັບການສໍ້ລາດບັງຫຼວງ;
- ມີແຈ້ງການ, ແຈ້ງຄວາມ, ລາຍງານ, ການສະເໜີ, ຄໍາຮ້ອງຟ້ອງ ກ່ຽວກັບການສໍ້ລາດບັງຫຼວງ;
- ມີປາກົດການຮັ່ງມີຜິດປົກກະຕິ ຂອງພະນັກງານ, ຜົວ ຫຼື ເມຍ, ລູກ ທີ່ຢູ່ໃນການຄຸ້ມຄອງຂອງຕົນ.

### ມາດຕາ 30 ຂັ້ນຕອນການດໍາເນີນການກວດກາ

**ການດໍາເນີນການກວດກາ ການສໍ້ລາດບັງຫຼວງ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:**

1. ຄົ້ນຄວ້າ ແຈ້ງການ, ແຈ້ງຄວາມ, ລາຍງານ, ການສະເໜີ ຫຼື ຄໍາຮ້ອງຟ້ອງ ແລະ ລົງເກັບກໍາຂໍ້ມູນ ຖ້າເຫັນວ່າມີຄວາມຈໍາເປັນ;
2. ກະກຽມ ແລະ ສ້າງແຜນການລົງກວດກາຕົວຈິງ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;
3. ກວດກາເອກະສານ ແລະ ຊັບສິນ ຂອງບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ເປັນຕົ້ນແມ່ນກວດກາການເງິນ-ການບັນຊີ, ລາຍຮັບ-ລາຍຈ່າຍ, ການໃຊ້ຈ່າຍທຶນຊ່ວຍເຫຼືອ ແລະ ເງິນກູ້ຢືມ;
4. ຮຽກເຊີນຜູ້ຕາງໜ້າການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງ ມາອະທິບາຍ, ໃຫ້ຄວາມກະຈ່າງແຈ້ງ;

5. ສະຫຼຸບ, ຕີລາຄາ ແລະ ລາຍງານ ຜົນຂອງການກວດກາ.

**ມາດຕາ 31 (ໃໝ່) ກຳນົດເວລາໃນການດຳເນີນການກວດກາ**

ກຳນົດເວລາໃນການດຳເນີນການກວດກາ ຂອງອົງການຕ້ານການສໍ້ລາດບັງຫຼວງ ມີ ດັ່ງນີ້:

- ສຳລັບອົງການຕ້ານການສໍ້ລາດບັງຫຼວງສູນກາງບໍ່ໃຫ້ເກີນເກົ້າສິບວັນ ນັບແຕ່ວັນດຳເນີນການກວດກາເປັນຕົ້ນໄປ. ຖ້າການກວດກາຫາກບໍ່ສຳເລັດ ກໍສາມາດດຳເນີນຕໍ່ໄປໄດ້ຕື່ມອີກສາມສິບວັນ, ໃນກໍລະນີທີ່ມີຄວາມຫຍຸ້ງຍາກເປັນພິເສດ ຊຶ່ງພົວພັນເຖິງຫຼາຍຂະແໜງການ, ຫຼາຍທ້ອງຖິ່ນ ກໍສາມາດຕໍ່ເວລາໄດ້ຕື່ມອີກ ແຕ່ທັງໝົດບໍ່ໃຫ້ເກີນໜຶ່ງຮ້ອຍແປດສິບວັນ;

- ສຳລັບອົງການຕ້ານການສໍ້ລາດບັງຫຼວງກະຊວງ-ອົງການ, ແຂວງ, ນະຄອນ ບໍ່ໃຫ້ເກີນຫົກສິບວັນ ນັບແຕ່ວັນດຳເນີນການກວດກາເປັນຕົ້ນໄປ, ໃນກໍລະນີທີ່ມີຄວາມຫຍຸ້ງຍາກ ສັບສົນ ກໍສາມາດຕໍ່ເວລາໄດ້ຕື່ມອີກ ສາມສິບວັນ;

- ສຳລັບອົງການຕ້ານການສໍ້ລາດບັງຫຼວງເມືອງ, ເທດສະບານ ບໍ່ໃຫ້ເກີນສາມສິບວັນ ນັບແຕ່ວັນດຳເນີນການກວດກາເປັນຕົ້ນໄປ, ໃນກໍລະນີທີ່ມີຄວາມຫຍຸ້ງຍາກ ຫຼື ຢູ່ຫ່າງໄກສອກຫຼີກ ກໍສາມາດດຳເນີນຕໍ່ໄປໄດ້ຕື່ມອີກ ສິບຫ້າວັນ.

**ມາດຕາ 32 ການຕົກລົງກ່ຽວກັບຜົນຂອງການກວດກາ**

ຜ່ານການກວດກາ ຖ້າມີຫຼັກຖານໜັກແໜ້ນ ອົງການຕ້ານການສໍ້ລາດບັງຫຼວງ ມີ ສິດຕົກລົງ ດັ່ງນີ້:

- ສະເໜີໃຫ້ອົງການທີ່ມີສິດ, ໜ້າທີ່ ກ່ຽວຂ້ອງສຶກສາອົບຮົມ, ກ່າວເຕືອນ ຫຼື ລົງວິໄນ ຕໍ່ຜູ້ລະເມີດ ຖ້າຫາກເປັນການລະເມີດທີ່ສ້າງຄວາມເສຍຫາຍບໍ່ຫຼວງຫຼາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 56 ແລະ 57 ຂອງກົດໝາຍສະບັບນີ້;

- ດຳເນີນການສືບສວນ-ສອບສວນ, ສະຫຼຸບຄະດີ ແລ້ວສົ່ງໃຫ້ຫົວໜ້າອົງການໄອຍະການປະຊາຊົນ ພິຈາລະນາສັ່ງຟ້ອງຂຶ້ນສານ ຖ້າຫາກເປັນການກະທຳຜິດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 58 ຫາ 61 ຂອງກົດໝາຍສະບັບນີ້.

**ມາດຕາ 33 ການປະຕິບັດຄຳສະເໜີຂອງອົງການຕ້ານການສໍ້ລາດບັງຫຼວງ**

ອົງການທີ່ໄດ້ຮັບຄຳສະເໜີຂອງ ອົງການຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍສະບັບນີ້ ຕ້ອງປະຕິບັດ ພາຍໃນກຳນົດເວລາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ; ຖ້າຫາກບໍ່ປະຕິບັດຕາມຄຳສະເໜີແລ້ວ ອົງການຕ້ານການສໍ້ລາດບັງຫຼວງ ມີສິດສະເໜີໃຫ້ຂັ້ນເທິງທີ່ກ່ຽວຂ້ອງຖັດນັ້ນ ເປັນຜູ້ແກ້ໄຂ; ໃນກໍລະນີທີ່ບໍ່ປະຕິບັດຕາມຄຳສະເໜີ ໂດຍບໍ່ມີເຫດຜົນ ຈະຖືວ່າເປັນການລະເມີດກົດໝາຍ.

## ໝວດທີ 5
## ການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ

**ມາດຕາ 34 (ໃໝ່) ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ**

**ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ມີ ດັ່ງນີ້:**

- ມີຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ ຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ;
- ມີການເຂົ້າມອບຕົວຂອງຜູ້ກະທຳຜິດ;
- ກວດກາ ພົບເຫັນຂໍ້ມູນ, ຫຼັກຖານໜັກແໜ້ນ ທີ່ບົ່ງບອກວ່າເປັນການສໍ້ລາດບັງຫຼວງ ແລະ ມີມູນຄ່າເສັຍຫາຍ ເກີນກວ່າ 5.000.000 ກີບ;
- ມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

**ມາດຕາ 35 (ໃໝ່) ຂັ້ນຕອນ ການສືບສວນ-ສອບສວນ**

**ຂັ້ນຕອນ ການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ມີ ດັ່ງນີ້:**

- ອອກຄຳສັ່ງເປີດການສືບສວນ-ສອບສວນ;
- ດຳເນີນການສືບສວນ-ສອບສວນ;
- ປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຂຶ້ນສານ.

**ມາດຕາ 36 (ໃໝ່) ການອອກຄຳສັ່ງເປີດການສືບສວນ-ສອບສວນ**

ໃນກໍລະນີທີ່ມີຂໍ້ມູນກ່ຽວກັບການກະທຳຜິດ ໃນສະຖານສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນ ໃນຂອບເຂດສິດອຳນາດຂອງຕົນ. ເນື້ອໃນຂອງຄຳສັ່ງນັ້ນ ຕ້ອງບອກວັນ, ເວລາ ແລະ ສະຖານທີ່ອອກຄຳສັ່ງ, ຊື່ ແລະ ນາມສະກຸນ, ໜ້າທີ່ຕຳແໜ່ງຂອງຜູ້ອອກຄຳສັ່ງ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ, ຂໍ້ມູນໃນການເປີດການສືບສວນ-ສອບສວນ, ສະຖານການກະທຳຜິດກ່ຽວກັບການສໍ້ລາດບັງຫຼວງ.

ໃນກໍລະນີທີ່ບໍ່ມີຂໍ້ມູນໜັກແໜ້ນໃຫ້ແກ່ການເປີດການສືບສວນ-ສອບສວນ ຫຼື ບໍ່ມີສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ຕ້ອງອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ ພ້ອມທັງແຈ້ງຄຳສັ່ງດັ່ງກ່າວໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນຊາບ.

ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ສາມາດຂໍອຸທອນຄຳສັ່ງບໍ່ເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ຕໍ່ ອົງການຕ້ານການສໍ້ລາດບັງຫຼວງຂັ້ນເທິງຖັດນັ້ນ ພາຍໃນກຳນົດເວລາເຈັດວັນ ນັບແຕ່ວັນຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ.

**ມາດຕາ 37 (ໃໝ່) ການດຳເນີນການສືບສວນ-ສອບສວນ**

ໃນການດຳເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ຕ້ອງນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 38 (ໃໝ່) ກຳນົດເວລາການດຳເນີນການສືບສວນ-ສອບສວນ**

ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງດຳເນີນການສືບສວນ-ສອບສວນ, ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ພ້ອມດ້ວຍຂອງກາງ ສົ່ງໃຫ້ອົງການໄອຍະການປະຊາຊົນ ພາຍໃນກຳນົດເວລາ ສອງເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ ສາມເດືອນ ໃນສະຖານຄະຣຸໂທດ ນັບແຕ່ວັນອອກຄຳສັ່ງເປີດການສືບສວນ-ສອບສວນ ເປັນຕົ້ນໄປ.

ຖ້າເຫັນວ່າມີຄວາມຈຳເປັນຕ້ອງສືບຕໍ່ດຳເນີນການສືບສວນ-ສອບສວນ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ສະເໜີຂໍຕໍ່ເວລາການສືບສວນ-ສອບສວນ ຈາກອົງການໄອຍະການປະຊາຊົນ. ອົງການໄອຍະການປະຊາຊົນ ອາດຕໍ່ເວລາການສືບສວນ-ສອບສວນ ໄດ້ອີກເທື່ອລະສອງເດືອນ ແຕ່ລວມທັງໝົດບໍ່ໃຫ້ເກີນ ຫົກເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ ເທື່ອລະສາມເດືອນ ແຕ່ລວມທັງໝົດບໍ່ໃຫ້ເກີນ ໜຶ່ງປີ ສຳລັບການກະທຳຜິດໃນສະຖານຄະຣຸໂທດ. ການສະເໜີຂໍຕໍ່ກຳນົດເວລາແຕ່ລະເທື່ອ ໃຫ້ດຳເນີນ ສິບຫ້າວັນ ກ່ອນໝົດກຳນົດເວລາສືບສວນ-ສອບສວນ.

ໃນກໍລະນີທີ່ມີການສົ່ງສຳນວນຄະດີຄືນ ໃຫ້ອົງການຕ້ານການສໍ້ລາດບັງຫຼວງ ດຳເນີນການສືບສວນ-ສອບສວນເພີ່ມເຕີມນັ້ນ ກຳນົດເວລາການສືບສວນ-ສອບສວນເພີ່ມເຕີມ ແມ່ນ ບໍ່ໃຫ້ເກີນ ສອງເດືອນ ນັບແຕ່ວັນອົງການຕ້ານການສໍ້ລາດບັງຫຼວງ ໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີທີ່ມີການສືບສວນ-ສອບສວນຄືນ ຄະດີທີ່ຖືກໂຈະ ຫຼື ຊັດມ້ຽນໄວ້ນັ້ນ ການສືບສວນ-ສອບສວນ ໃຫ້ປະຕິບັດຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນວັກ 1 ແລະ ວັກ 2 ຂອງມາດຕານີ້ ນັບແຕ່ວັນອອກຄຳສັ່ງໃຫ້ສືບສວນ-ສອບສວນຄະດີຄືນເປັນຕົ້ນໄປ.

**ມາດຕາ 39 (ໃໝ່) ການປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຂຶ້ນສານ**

ພາຍຫຼັງສິ້ນສຸດການສືບສວນ-ສອບສວນແລ້ວ ຖ້າຫາກມີຂໍ້ມູນຫຼັກຖານໜັກແໜ້ນວ່າການກະທຳຜິດນັ້ນ ເປັນການສໍ້ລາດບັງຫຼວງ ຊຶ່ງໄດ້ກໍ່ຄວາມເສັຍຫາຍ ເກີນກວ່າ 5.000.000 ກີບ ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງສະຫຼຸບຄະດີ ພ້ອມດ້ວຍຂອງກາງ ແລະ ຜູ້ຖືກຫາສົ່ງໃຫ້ອົງການໄອຍະການປະຊາຊົນ ພິຈາລະນາສັ່ງຟ້ອງຂຶ້ນສານ.

**ມາດຕາ 40 (ໃໝ່) ເຈົ້າໜ້າທີ່ສືບສວນ-ສອບສວນ**

ເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບຄະດີສໍ້ລາດບັງຫຼວງ ແມ່ນ ພະນັກງານສັງກັດ ຢູ່ ອົງການຕ້ານການສໍ້ລາດບັງຫຼວງ ຊຶ່ງມີໜ້າທີ່ກວດກາ ແລະ ສືບສວນ-ສອບສວນ ຕາມກົດໝາຍສະບັບນີ້ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ.

ສຳລັບການຈັດຕັ້ງ, ການເຄື່ອນໄຫວ ແລະມາດຕະຖານຂອງເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບຄະດີສໍ້ລາດບັງຫຼວງ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 41(ໃໝ່) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ**

**ໃນການດຳເນີນຄະດີ ກ່ຽວກັບການສໍ້ລາດບັງຫຼວງ ເຈົ້າໜ້າທີ່ສືບສວນ-ສອບສວນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຮັບ ແລະ ບັນທຶກການແຈ້ງຄວາມ, ການສະເໜີ, ການລາຍງານ ຫຼື ການຮ້ອງຟ້ອງ ກ່ຽວກັບການສໍ້ລາດບັງຫຼວງ;
2. ສະເໜີອອກໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວ ຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊັດມ້ຽນຄະດີອາຍາ;
3. ດຳເນີນການສືບສວນ-ສອບສວນ ການຈັດຕັ້ງ, ຜູ້ຖືກຫາ, ຜູ້ຖືກເສັຍຫາຍ, ພະຍານ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ;
4. ລົງກວດກາ, ພິສູດ ພ້ອມທັງເກັບກຳ ລວບລວມຂໍ້ມູນຫຼັກຖານຕ່າງໆ ກ່ຽວກັບການກະທຳຜິດ ໃນສະຖານສໍ້ລາດບັງຫຼວງ;
5. ຍຶດ ແລະ ເກັບຮັກສາຂອງກາງ ທີ່ພົວພັນກັບການສໍ້ລາດບັງຫຼວງ;
6. ຊອກຫາ, ພາຕົວຜູ້ຖືກຫາ ແລະ ຄົ້ນຕົວບຸກຄົນ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດຄົ້ນເຄຫະສະຖານ, ພາຫະນະ, ຈັບຕົວ ຕາມຄຳສັ່ງຂອງ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ;
8. ສະຫຼຸບ ແລະ ລາຍງານກ່ຽວກັບຜົນຂອງການສືບສວນ-ສອບສວນ ຕໍ່ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມຄຳສັ່ງຂອງຫົວໜ້າ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 42 (ປັບປຸງ) ການຂໍອຸທອນຂອງອົງການຕ້ານການສໍ້ລາດບັງຫຼວງ**

ໃນກໍລະນີທີ່ຫົວໜ້າອົງການໄອຍະການປະຊາຊົນ ຫາກບໍ່ສັ່ງຟ້ອງຂຶ້ນສານ ພາຍໃນກຳນົດເວລາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ອົງການຕ້ານການສໍ້ລາດບັງ

ຫຼວງ ມີສິດຂໍອຸທອນຄຳສັ່ງບໍ່ສັ່ງຟ້ອງຂອງຫົວໜ້າອົງການໄອຍະການປະຊາຊົນນັ້ນໄປຍັງອົງການໄອຍະການປະຊາຊົນຂັ້ນເທິງຖັດນັ້ນ ເພື່ອພິຈາລະນາ.

## ໝວດທີ 6
## ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

**ມາດຕາ 43 ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ເມື່ອຄຳຕັດສິນຂອງ ສານປະຊາຊົນ ຫາກໃຊ້ໄດ້ຢ່າງເດັດຂາດແລ້ວ ຕ້ອງນຳເອົາຄຳຕັດສິນນັ້ນມາຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ບໍ່ມີສິດເຂົ້າ ແຊກແຊງ, ຂັດຂວາງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບການສໍ້ລາດບັງຫຼວງ ເປັນເດັດຂາດ.

**ມາດຕາ 44 ການກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ອົງການຕ້ານການສໍ້ລາດບັງຫຼວງ ແລະ ອົງການອື່ນ ທີ່ກ່ຽວຂ້ອງ ຕ້ອງຕິດຕາມ ກວດກາ, ຊຸກຍູ້, ໃຫ້ການຊ່ວຍເຫຼືອແກ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກ່ຽວກັບຄະດີສໍ້ລາດບັງຫຼວງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອຮັບປະກັນໃຫ້ຄຳຕັດສິນຂອງສານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

## ໝວດທີ 7
## ອົງການຕ້ານການສໍ້ລາດບັງຫຼວງ

**ມາດຕາ 45 (ປັບປຸງ) ທີ່ຕັ້ງ, ພາລະບົດບາດ**

ອົງການຕ້ານການສໍ້ລາດບັງຫຼວງ ແມ່ນ ອົງການລັດ ຊຶ່ງມີພາລະບົດບາດສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ອົງການກວດກາລັດ ແຕ່ລະຂັ້ນ, ແຕ່ລະຂະແໜງການ ເປັນຜູ້ຈັດຕັ້ງປະຕິບັດ.

**ລະບົບອົງການຕ້ານການສໍ້ລາດບັງຫຼວງ ປະກອບດ້ວຍ:**

- ອົງການຕ້ານການສໍ້ລາດບັງຫຼວງສູນກາງ;

- ອົງການຕ້ານການສໍ້ລາດບັງຫຼວງກະຊວງ-ອົງການ;
- ອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນ;
- ອົງການຕ້ານການສໍ້ລາດບັງຫຼວງເມືອງ, ເທດສະບານ.

ອົງການຕ້ານການສໍ້ລາດບັງຫຼວງ ປະຕິບັດພາລະບົດບາດຂອງຕົນ ຢ່າງເປັນເອກະລາດ.

**ມາດຕາ 46 (ປັບປຸງ) ລະບົບການຈັດຕັ້ງ ແລະ ໂຄງປະກອບບຸກຄະລາກອນ**

**ລະບົບການຈັດຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງ ປະກອບດ້ວຍ:**

- ອົງການຕ້ານການສໍ້ລາດບັງຫຼວງສູນກາງ;
- ອົງການຕ້ານການສໍ້ລາດບັງຫຼວງກະຊວງ-ອົງການ;
- ອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນ;
- ອົງການຕ້ານການສໍ້ລາດບັງຫຼວງເມືອງ, ເທດສະບານ.

ໂຄງປະກອບບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ຈຳນວນໜຶ່ງ ແລະ ພະນັກງານຊ່ວຍວຽກຈຳນວນໜຶ່ງ.

ປະທານ, ຮອງປະທານ ອົງການກວດກາລັດແຕ່ລະຂັ້ນ, ແຕ່ລະຂະແໜງການ ເປັນທັງຫົວໜ້າ, ຮອງຫົວໜ້າ ອົງການຕ້ານການສໍ້ລາດບັງຫຼວງ.

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຕາມວິທີການດຽວກັນກັບສະມາຊິກລັດຖະບານ.

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງກະຊວງ-ອົງການ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີ, ຫົວໜ້າອົງການ ພາຍຫຼັງໄດ້ປະສານສົມທົບກັບ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ.

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ພາຍຫຼັງໄດ້ປະສານສົມທົບກັບເຈົ້າແຂວງ, ເຈົ້າຄອງນະຄອນ ເວັ້ນເສຍແຕ່ ມີລະບຽບການກຳນົດໄວ້ຕ່າງຫາກ.

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງເມືອງ, ເທດສະບານ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ພາຍຫຼັງໄດ້ປະສານສົມທົບກັບເຈົ້າເມືອງ, ຫົວໜ້າເທດສະບານ ເວັ້ນເສຍແຕ່ ມີລະບຽບການກຳນົດໄວ້ຕ່າງຫາກ.

ສຳລັບກົງຈັກ ແລະ ພະນັກງານຊ່ວຍວຽກ ຂອງອົງການຕ້ານການສໍ້ລາດບັງຫຼວງ ໃຫ້ຈັດຕັ້ງຢູ່ໃນໂຄງປະກອບກົງຈັກການຈັດຕັ້ງຂອງອົງການກວດກາລັດແຕ່ລະຂັ້ນ ແລະ ຂະແໜງການ ຕາມຄວາມເໝາະສົມ.

ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ

ອົງການຕ້ານການສໍ້ລາດບັງຫຼວງສູນກາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ທິດທາງແຜນການ, ກົດໝາຍ, ລະບຽບການ ແລະ ມາດຕະການ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາ;

2. ຊີ້ນໍາ, ກວດກາການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຂອບເຂດທົ່ວປະເທດ;

3. ຮັບ ແລະ ຄົ້ນຄວ້າຄໍາຮ້ອງ, ຄໍາສະເໜີຂອງພົນລະເມືອງ ກ່ຽວກັບການສໍ້ລາດບັງຫຼວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ດໍາເນີນການຕິດຕາມ, ກວດກາ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຖັນແຖວພະນັກງານຂັ້ນສູນກາງຄຸ້ມຄອງ ແລະ ພະນັກງານອື່ນ ຕາມການມອບໝາຍ;

5. ຮັບແຈ້ງ ແລະ ກວດກາຊັບສິນ ໃນຖັນແຖວພະນັກງານຂອງລັດຂັ້ນສູນກາງຄຸ້ມຄອງ;

6. ອອກຄໍາສັ່ງ ເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ, ພາຕົວ, ກັກຕົວ, ດໍາເນີນການສືບສວນ-ສອບສວນ ແລະ ສະຫຼຸບຜົນຂອງການສືບສວນ-ສອບສວນ ພ້ອມທັງປະກອບສໍານວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຂຶ້ນສານ ກ່ຽວກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ;

7. ສະເໜີໂຈະຕໍາແໜ່ງ, ໜ້າທີ່ຊົ່ວຄາວ ຫຼື ບໍ່ໃຫ້ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ໃນເວລາກໍາລັງດໍາເນີນການກວດກາ ຫຼື ສືບສວນ-ສອບສວນຜູ້ກ່ຽວ;

8. ພົວພັນ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດສິດ, ໜ້າທີ່ຂອງຕົນ;

9. ພິຈາລະນາ, ຕົກລົງ ແລະ ນໍາໃຊ້ມາດຕະການຕ່າງໆ ຕໍ່ຜູ້ຖືກກວດກາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

11. ສະຫຼຸບຜົນຂອງການປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລ້ວລາຍງານໃຫ້ ນາຍົກລັດຖະມົນຕີ ແລະ ຄະນະປະຈໍາສະພາແຫ່ງຊາດ ໃນແຕ່ລະໄລຍະ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 48 (ໃໝ່) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງກະຊວງ- ອົງການ**

**ອົງການຕ້ານການສໍ້ລາດບັງຫຼວງກະຊວງ-ອົງການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ທິດທາງແຜນການ, ກົດໝາຍ, ລະບຽບການ ແລະ ມາດຕະການ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;
2. ຮັບ ແລະ ຄົ້ນຄວ້າຄໍາຮ້ອງ, ຄໍາສະເໜີ ຂອງພົນລະເມືອງ ກ່ຽວກັບການສໍ້ລາດບັງຫຼວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ດໍາເນີນ ການຕິດຕາມ, ກວດກາ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຖັນແຖວພະນັກງານຂັ້ນກະຊວງ-ອົງການຄຸ້ມຄອງ ແລະ ພະນັກງານອື່ນ ຕາມການມອບໝາຍ;
4. ຮັບແຈ້ງ ແລະ ກວດກາຊັບສິນ ຂອງພະນັກງານລັດຂັ້ນກະຊວງ-ອົງການຄຸ້ມຄອງ;
5. ດໍາເນີນການສືບສວນ-ສອບສວນ ພະນັກງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງ-ອົງການຕົນ ຕາມການມອບໝາຍຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ແລະ ສະຫຼຸບຜົນຂອງການສືບສວນ-ສອບສວນ ແລ້ວລາຍງານໃຫ້ອົງການຕ້ານການສໍ້ລາດບັງຫຼວງສູນກາງ ເພື່ອພິຈາລະນາ;
6. ສະເໜີງົດຕໍາແໜ່ງ, ໜ້າທີ່ ຊົ່ວຄາວ ຫຼື ບໍ່ໃຫ້ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ໃນເວລາກໍາລັງດໍາເນີນການກວດກາ ຫຼື ສືບສວນ-ສອບສວນ ຜູ້ກ່ຽວ;
7. ພົວພັນ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;
8. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ, ສືບສວນ-ສອບສວນ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ ເພື່ອພິຈາລະນາຕົກລົງ;
9. ສະຫຼຸບຜົນຂອງການປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລ້ວລາຍງານໃຫ້ອົງການຕ້ານການສໍ້ລາດບັງຫຼວງສູນກາງ, ລັດຖະມົນຕີ ແລະ ຫົວໜ້າອົງການຂອງຕົນ ໃນແຕ່ລະໄລຍະ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນ**

**ອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ທິດທາງແຜນການ, ກົດໝາຍ, ລະບຽບການ ແລະ ມາດຕະການກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;
2. ຊີ້ນໍາ, ກວດກາການຈັດຕັ້ງປະຕິບັດວຽກງານກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ຮັບ ແລະ ຄົ້ນຄວ້າຄຳຮ້ອງ, ຄຳສະເໜີ ຂອງພົນລະເມືອງ, ການຈັດຕັ້ງ ກ່ຽວກັບການສໍ້ລາດບັງຫຼວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ຮັບແຈ້ງ ແລະ ກວດກາຊັບສິນ ຂອງພະນັກງານລັດຂັ້ນຕົນຄຸ້ມຄອງ;

5. ອອກຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ດຳເນີນການສືບສວນ-ສອບສວນ ແລະ ສະຫຼຸບຜົນຂອງການສືບສວນ-ສອບສວນ ກ່ຽວກັບການສໍ້ລາດບັງຫຼວງ;

6. ດຳເນີນການສືບສວນ-ສອບສວນ ພະນັກງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງແຂວງ, ນະຄອນ ແລະ ພະນັກງານອື່ນ ຕາມການມອບໝາຍ ແລ້ວປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງຂຶ້ນສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

7. ສະເໜີງົດຕຳແໜ່ງ, ໜ້າທີ່ ຊົ່ວຄາວ ຫຼື ບໍ່ໃຫ້ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ໃນເວລາດຳເນີນການກວດກາ ຫຼື ສືບສວນ-ສອບສວນຜູ້ກ່ຽວ;

8. ພົວພັນ, ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຂອງຕົນ;

9. ສະເໜີ ມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ ເພື່ອພິຈາລະນາຕົກລົງ;

10. ສະຫຼຸບຜົນຂອງການປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລ້ວ ລາຍງານໃຫ້ອົງການຕ້ານການສໍ້ລາດບັງຫຼວງສູນກາງ, ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຂອງຕົນ ໃນແຕ່ລະໄລຍະ;

11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 50 (ໃໝ່) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງເມືອງ, ເທດສະບານ**

**ອົງການຕ້ານການສໍ້ລາດບັງຫຼວງເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ເຜີຍແຜ່ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ທິດທາງແຜນການ, ກົດໝາຍ, ລະບຽບການ ແລະ ມາດຕະການກ່ຽວກັບ ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;

2. ຮັບ ແລະ ຄົ້ນຄວ້າຄຳຮ້ອງ, ຄຳສະເໜີ ຂອງພົນລະເມືອງ, ການຈັດຕັ້ງ ກ່ຽວກັບການສໍ້ລາດບັງຫຼວງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ດຳເນີນ ການຕິດຕາມ, ກວດກາ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕໍ່ພະນັກງານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງເມືອງ, ເທດສະບານ ຕາມການມອບໝາຍ;

4. ຮັບແຈ້ງ ແລະ ກວດກາຊັບສິນ ຂອງພະນັກງານລັດຂັ້ນຕົນຄຸ້ມຄອງ;

5. ດຳເນີນການສືບສວນ-ສອບສວນ ພະນັກງານໃນຂອບເຂດຂັ້ນຕົນຄຸ້ມຄອງ ຕາມການມອບໝາຍຂອງ ອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນ ແລະ ສະຫຼຸບຜົນຂອງການສືບສວນ-ສອບສວນ ແລ້ວລາຍງານໃຫ້ອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນ ພິຈາລະນາ;

6. ສະເໜີງົດຕຳແໜ່ງ, ໜ້າທີ່ ຊົ່ວຄາວ ຫຼື ບໍ່ໃຫ້ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ໃນເວລາດຳເນີນການກວດກາ ຫຼື ສືບສວນ-ສອບສວນຜູ້ກ່ຽວ;

7. ພົວພັນ, ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;

8. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ, ສືບສວນ-ສອບສວນ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ ເພື່ອພິຈາລະນາຕົກລົງ;

9. ສະຫຼຸບຜົນຂອງການປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລ້ວລາຍງານໃຫ້ອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນ, ເຈົ້າເມືອງ, ຫົວໜ້າເທດສະບານ ໃນແຕ່ລະໄລຍະ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 51 (ປັບປຸງ) ມາດຕະຖານ, ເງື່ອນໄຂ ຂອງພະນັກງານຕ້ານການສໍ້ລາດບັງຫຼວງ**

**ພະນັກງານຕ້ານການສໍ້ລາດບັງຫຼວງ ມີ ມາດຕະຖານ, ເງື່ອນໄຂ ດັ່ງນີ້:**

1. ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມສັດຊື່ບໍລິສຸດ, ໂປ່ງໃສ, ບໍ່ສໍ້ລາດບັງຫຼວງ;
2. ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;
3. ມີຈັນຍາບັນ, ຈັນຍາທຳ, ຄວາມຮູ້, ຄວາມສາມາດ ແລະ ລະດັບວິຊາສະເພາະ ທີ່ສົມຄູ່ກັບວຽກງານທີ່ຕົນຮັບຜິດຊອບ;
4. ມີຄວາມຍຸຕິທຳ, ເບິ່ງບັນຫາເລິກເຊິ່ງ, ຮອບຄອບ, ພາວະວິໄສ, ເບິ່ງກວ້າງມອງໄກ, ບໍ່ລຳອຽງ, ບໍ່ອະຄະຕິ, ໄຈ້ແຍກຂໍ້ມູນຢ່າງຖືກຕ້ອງ, ຊັດເຈນ ແລະ ກ້າຫານ ໃນການຕັດສິນບັນຫາ;
5. ເປັນຜູ້ເຄັ່ງຄັດ ແລະ ເປັນແບບຢ່າງໃນການປະຕິບັດລະບຽບກົດໝາຍ, ມີສະຕິຕໍ່ການຈັດຕັ້ງສູງ, ບໍ່ປະນີປະນອມ, ເດັດດ່ຽວສະກັດກັ້ນ ແລະ ຕ້ານ ທຸກປາກົດການສໍ້ລາດບັງຫຼວງ;
6. ຮັກສາຄວາມລັບທາງດ້ານວິຊາສະເພາະ;
7. ມີສຸຂະພາບດີ.

ສຳລັບຜູ້ເປັນຫົວໜ້າ ຕ້ອງແມ່ນຜູ້ມີຖານະທາງການເມືອງ, ມີບົດບາດອິດທິພົນ ແລະ ໄດ້ຮັບຄວາມເຊື່ອຖືຈາກສັງຄົມ.

# ໝວດທີ 8
## ສິດ, ພັນທະ ແລະ ຄວາມຮັບຜິດຊອບຂອງຜູ້ຖືກກວດກາ

**ມາດຕາ 52 (ປັບປຸງ) ສິດຂອງຜູ້ຖືກກວດກາ**

**ຜູ້ຖືກກວດກາ ມີ ສິດ ດັ່ງນີ້:**

1. ປົກປ້ອງຕົນເອງ, ແກ້ຂໍ້ກ່າວຫາ ດ້ວຍການນຳເອົາຂໍ້ມູນ, ຫຼັກຖານມາຊີ້ແຈງ, ອະທິບາຍຕໍ່ອົງການຕ້ານການສໍ້ລາດບັງຫຼວງ;

2. ຄັດຄ້ານຕົວພະນັກງານຕ້ານການສໍ້ລາດບັງຫຼວງ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ມີຂໍ້ຂັດແຍ່ງ ຫຼື ມີອະຄະຕິຕໍ່ຕົນມາກ່ອນ;

3. ສະເໜີ, ລາຍງານຄຳຄິດຄຳເຫັນ, ຊີ້ແຈງເຫດຜົນຂອງຕົນ ຕໍ່ການຈັດຕັ້ງຂັ້ນເທິງ ເພື່ອໃຫ້ພິຈາລະນາຄືນຄຳຕົກລົງກ່ຽວກັບຜົນຂອງການກວດກາ ຫຼື ຜົນການສືບສວນ-ສອບສວນຂອງອົງການຕ້ານການສໍ້ລາດບັງຫຼວງ; ການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງນັ້ນ ຕ້ອງພິຈາລະນາ ແລະ ຕອບຜູ້ກ່ຽວພາຍໃນສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ, ຄຳຊີ້ແຈງເປັນຕົ້ນໄປ;

4. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ຜູ້ຖືກກວດກາ ສາມາດດຳເນີນການປົກປ້ອງດ້ວຍຕົນເອງ, ເອົາທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຊ່ວຍເຫຼືອທາງດ້ານກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 53 (ປັບປຸງ) ພັນທະ ແລະ ຄວາມຮັບຜິດຊອບຂອງ ຜູ້ຖືກກວດກາ**

**ບຸກຄົນ ແລະ ການຈັດຕັ້ງ ທີ່ຖືກກວດກາ ມີ ພັນທະ ແລະ ຄວາມຮັບຜິດຊອບ ດັ່ງນີ້:**

1. ປະຕິບັດຕາມແຈ້ງການ, ຄຳສະເໜີ, ຄຳສັ່ງ, ຄຳແນະນຳ, ແລະ ຄຳຕົກລົງຂອງອົງການຕ້ານການສໍ້ລາດບັງຫຼວງ ຢ່າງເຂັ້ມງວດ ແລະ ທັນເວລາ;

2. ໃຫ້ການຮ່ວມມື, ອຳນວຍຄວາມສະດວກໃຫ້ແກ່ການກວດກາ, ການສືບສວນ-ສອບສວນ, ສະໜອງ ຂໍ້ມູນຂ່າວສານ, ຫຼັກຖານ, ເອກະສານຕ່າງໆໃຫ້ທັນເວລາ, ໃຫ້ຄຳຊີ້ແຈງ, ອະທິບາຍຕາມການສະເໜີ ຂອງພະນັກງານຕ້ານການສໍ້ລາດບັງຫຼວງ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ;

3. ບໍ່ມອບ, ໂອນ, ຂາຍ, ສັບປ່ຽນ, ນຳໄປເປັນຫຼັກຊັບຄ້ຳປະກັນ ຊັບສິນຕ່າງໆຂອງຕົນໃນເວລາກຳລັງຖືກກວດກາ ຫຼື ຖືກສືບສວນ-ສອບສວນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກອົງການຕ້ານການສໍ້ລາດບັງຫຼວງ;

4. ປະຕິບັດພັນທະ ແລະ ຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ຖ້າວ່າ ບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ຫາກບໍ່ປະຕິບັດພັນທະ ແລະ ຄວາມຮັບຜິດຊອບທີ່ກ່າວມາເທິງນີ້ ຫຼື ຂັດຂວາງ, ບໍ່ໃຫ້ການຮ່ວມມື ຈະຖືວ່າເປັນການ

ລະເມີດລະບຽບກົດໝາຍ ແລະ ຈະຖືກລົງວິໄນ ຫຼື ຖືກປະຕິບັດມາດຕະການອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 54 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍ ສະບັບນີ້ ເປັນຕົ້ນ ໄດ້ໃຫ້ການຮ່ວມມື, ສະໜອງຂໍ້ມູນ, ຫຼັກຖານ, ສະເໜີ, ລາຍງານ ກ່ຽວກັບການສໍ້ລາດບັງຫຼວງ ຈະໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງກົດໝາຍສະບັບນີ້ ແລະ ໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 55 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ຖືກລົງວິໄນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຫຼື ຖືກປະຕິບັດມາດຕະການທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 56 (ປັບປຸງ) ມາດຕະການສຶກສາອົບຮົມ

ຜ່ານການດຳເນີນການກວດກາ ຫາກພົບເຫັນ ການກະທຳຜິດ ທີ່ເປັນການສໍ້ລາດບັງຫຼວງ ຊຶ່ງກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ 5.000.000 ກີບ ແລະ ຜູ້ກະທຳຜິດມີຄວາມຈິງໃຈລາຍງານ, ຮັບສາລະພາບວ່າໄດ້ກະທຳຜິດຕໍ່ການຈັດຕັ້ງ ແລະ ໄດ້ສົ່ງຊັບທີ່ເອົາໄປ ໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ຢ່າງຄົບຖ້ວນແລ້ວ ຜູ້ກ່ຽວກໍຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

### ມາດຕາ 57 (ປັບປຸງ) ມາດຕະການທາງວິໄນ

**ຜ່ານການດຳເນີນການກວດກາ ຫາກພົບເຫັນການກະທຳຜິດ ທີ່ເປັນການສໍ້ລາດບັງຫຼວງ ຊຶ່ງກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ 5.000.000 ກີບ, ແຕ່ຜູ້ກະທຳຜິດບໍ່ຈິງໃຈລາຍງານ ຫຼື ຫຼົບຫຼີກຈາກຄວາມຜິດ ຜູ້ກ່ຽວກໍຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:**

1 **ສຳລັບພະນັກງານຂອງລັດ**

- ຕິຕຽນ, ກ່າວເຕືອນຄວາມຜິດ ແລ້ວບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;

- ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ ແລ້ວບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;

- ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ຕໍ່າກວ່າເກົ່າ ແລ້ວບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;

- ປົດຕໍາແໜ່ງທັງໝົດ ແລ້ວບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;

- ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນເອົາໄປ ໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

2. **ສໍາລັບພະນັກງານວິສາຫະກິດ, ພະນັກງານຕ່າງປະເທດ ແລະ ພະນັກງານອົງການຈັດຕັ້ງສາກົນ**

- ກ່າວເຕືອນຄວາມຜິດ.

**ມາດຕາ 58 (ປັບປຸງ) ມາດຕະການທາງອາຍາ**

ພະນັກງານຜູ້ໃດ ຫາກມີພຶດຕິກໍາ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍ ເກີນກວ່າ 5.000.000 ກີບ ຈະຖືກດໍາເນີນຄະດີອາຍາ ຕາມກົດໝາຍ.

ສໍາລັບການຍັກຍອກ, ສໍ້ໂກງຊັບຂອງລັດ ຫຼື ລວມໝູ່ ໃຫ້ສິນບົນ, ຮັບສິນບົນ, ສວຍໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່, ສວຍໃຊ້ຊັບຂອງລັດ ຫຼື ລວມໝູ່, ໃຊ້ຖານະຕໍາແໜ່ງ, ສິດອໍານາດ, ໜ້າທີ່ ເກີນຂອບເຂດ, ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມ ຈະຖືກລົງໂທດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍອາຍາ.

**ມາດຕາ 59 (ປັບປຸງ) ການລັກໂລບ, ການປອມແປງ ມາດຕະຖານເຕັກນິກກໍ່ສ້າງ, ການໂກງການປະມູນ ຫຼື ການສໍາປະທານ**

ພະນັກງານຜູ້ໃດ ຫາກໄດ້ລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ສໍາຫຼວດ, ອອກແບບ, ຄິດໄລ່, ໂກງການປະມູນ ຫຼື ການສໍາປະທານ ຊຶ່ງສ້າງຜົນເສຍຫາຍ ເກີນກວ່າ 5.000.000 ກີບ ຫາ 50.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ໜຶ່ງ ປີ ຫາ ສີ່ ປີ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າເສຍຫາຍ.

ໃນກໍລະນີຜູ້ກະທໍາຜິດ ຫາກໄດ້ເອົາການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ສໍາຫຼວດ, ອອກແບບ, ຄິດໄລ່, ໂກງການປະມູນ ຫຼື ການສໍາປະທານ ເປັນອາຊີບ ແລະ ມີຜົນເສຍຫາຍ ເກີນກວ່າ 50.000.000 ກີບ ຫາ 700.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າສີ່ ປີ ຫາ ສິບສີ່ ປີ ແລະ ຈະຖືກປັບໃໝໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າເສຍຫາຍ.

ໃນກໍລະນີຜູ້ກະທໍາຜິດ ຫາກໄດ້ເອົາການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ສໍາຫຼວດ, ອອກແບບ, ຄິດໄລ່, ໂຄງການປະມູນ ຫຼື ການສໍາປະທານ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ແລະ ມີຄວາມເສັຍຫາຍ ເກີນກວ່າ 700.000.000 ຫາ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສິບສີ່ປີ ຫາ ຊາວ ປີ ແລະຈະຖືກປັບໃໝໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າເສັຍຫາຍ.

ໃນກໍລະນີຜູ້ກະທໍາຜິດ ຫາກໄດ້ເອົາການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ, ສໍາຫຼວດ, ອອກແບບ, ຄິດໄລ່, ໂຄງການປະມູນ ຫຼື ການສໍາປະທານ ເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ແລະ ມີຄວາມເສັຍຫາຍ ເກີນກວ່າ 2.000.000.000 ກີບ ຈະຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ (1%) ຂອງມູນຄ່າເສັຍຫາຍ.

**ມາດຕາ 60 ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ**

ພະນັກງານຜູ້ໃດ ຫາກໄດ້ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ ເພື່ອຫາຜົນປະໂຫຍດສ່ວນຕົວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ10.000.000 ກີບ.

**ມາດຕາ 61 ການກົດໜ່ວງ, ຖ່ວງດຶງເອກະສານ**

ພະນັກງານຜູ້ໃດ ຫາກໄດ້ກົດໜ່ວງ, ຖ່ວງດຶງເອກະສານ ໂດຍເຈດຕະນາ ເພື່ອຫາຜົນປະໂຫຍດໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ.

**ມາດຕາ 62 (ປັບປຸງ) ມາດຕະການທາງແພ່ງ**

ພະນັກງານຜູ້ໃດ ຫາກໄດ້ກະທໍາຜິດໃນສະຖານສໍ້ລາດບັງຫຼວງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສັຍຫາຍ ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ນອກຈາກຈະໄດ້ຮັບໂທດທາງອາຍາແລ້ວ ຍັງຈະຕ້ອງໄດ້ໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ ແລະ ຊັບສິນທີ່ໄດ້ມາຈາກການກະທໍາຜິດນັ້ນກໍຈະຖືກຮິບເປັນຂອງລັດ ຫຼື ສົ່ງຄືນ ໃຫ້ເຈົ້າກໍາມະສິດ ຫຼື ຜູ້ເປັນເຈົ້າຂອງ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 64 (ປັບປຸງ) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ອົງການຕ້ານການສໍ້ລາດບັງຫຼວງ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການອື່ນທີ່ກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 65 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງທີ່ກສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 03/ສພຊ ລົງວັນທີ 19 ພຶດສະພາ 2005.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້